ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: ...003.... /ທຄຕລ
ນະຄອນຫຼວງວຽງຈັນ ...13 FEB 2017...

# ຂໍ້ຕົກລົງ

## ວ່າດ້ວຍການຍົກຍ້າຍຮອງຜູ້ອຳນວຍການໃຫຍ່ ທຄຕລ

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ ລົງວັນທີ 26/12/2006;
- ອີງຕາມການຕົກລົງເຫັນດີເປັນເອກະພາບຂອງ ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຄັ້ງວັນທີ 31/01/2017;
- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຢູ່ ທະນາຄານແຫ່ງ ສປປ ລາວ;
- ອີງຕາມແຈ້ງການຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 38/ກຈພ ລົງວັນທີ 23/01/2017.

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ:**

**ມາດຕາ 1:** ຍົກຍ້າຍ **ທ່ານ ນ. ຂັນທະລີ ວົງໄຊຍະລາດ** ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄປຮັບໜ້າທີ່ໃໝ່ ຢູ່ ທະນາຄານແຫ່ງ ສປປ ລາວ, ນັບແຕ່ວັນທີ **01/03/2017** ເປັນຕົ້ນໄປ.

**ມາດຕາ 2:** ກ່ອນຜູ້ກ່ຽວຈະໄປຮັບໜ້າທີ່ວຽກງານໃໝ່ໃຫ້ສະຫຼຸບ ແລະ ມອບວຽກທີ່ຕົນຮັບຜິດຊອບທັງໝົດ ຄືນໃຫ້ຜູ້ມາປ່ຽນແທນຢ່າງເປັນລາຍລັກອັກສອນ.

**ມາດຕາ 3:** ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ທຸກພາກສ່ວນທີ່ກ່ຽວຂ້ອງ, ພ້ອມດ້ວຍຜູ້ກ່ຽວຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ພູຊົງ ຈັນທະຈັກ**